ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມໃຫຍ່
# ກຳມະບານຮາກຖານ ທຫລ ຄັ້ງທີ V




ກອງປະຊຸມໃຫຍ່ຜູ້ແທນກຳມະບານຮາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ V ໄດ້ສຳເລັດລົງຢ່າງຈົບງາມໃນຕອນເຊົ້າຂອງວັນທີ 19 ພຶດສະພາ 2020 ທີ່ ສະໂມສອນ ສະຖາບັນການທະນາຄານ, ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ຄຳວົງ ທິບພະວົງ ຮອງເລຂາຄະນະພັກ ທຫລ, ຮອງຜູ້ວ່າການ ທຫລ; ສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ, ຄະນະພັກ ທຫລ, ປະທານສະຫະພັນກຳມະບານ ທຫລ ແລະ ສະຫາຍ ພານຸສັກ ແກ່ນວົງພະຈັນ, ຄະນະພັກ ທຫລ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ; ພາຍໃຕ້ການເປັນປະທານຂອງສະຫາຍນາງ ຟອງຈິນດາ ແສງສຸລິວົງ ປະທານສະຫະພັນກຳມະບານຮາກຖານ ທຫລ ແລະ ຜູ້ແທນສະມາຊິກສະຫະພັນກຳມະບານຮາກຖານ ທຫລ ເຂົ້າຮ່ວມ.

ກອງປະຊຸມໄດ້ຜ່ານຮ່າງບົດລາຍງານການເມືອງ ທີ່ໄດ້ສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງກຳມະບານຮາກຖານ ທຫລ ໃນໄລຍະປີ 2012-2019 ຜ່ານມາ ໃນຫຼາຍດ້ານຄື: ດ້ານການເມືອງ-ແນວຄິດ: ໄດ້ເອົາໃຈໃສ່ຊີ້ນຳ-ນຳພາບັນດາໜ່ວຍກຳມະບານໃນການສຶກສາອົບຮົມວຽກງານການເມືອງ-ແນວຄິດໃຫ້ແກ່ສະມາຊິກກຳມະບານພາຍໃນແຕ່ລະໜ່ວຍຢ່າງເປັນປົກກະຕິ ໂດຍເນັ້ນການຮ່ວມຊີວິດການເມືອງ, ການປະຕິບັດຄຳຂວັນ 5 ເປັນເຈົ້າ ແລະ ເຂົ້າຮ່ວມຮັບຟັງການເຜີຍແຜ່ເອກະສານສຳຄັນຕ່າງໆຂອງຂັ້ນເທິງ; ດ້ານກິງຈັກການຈັດຕັ້ງ ແລະ ກໍ່ສ້າງສະມາຊິກກຳມະບານ: ໄດ້ເອົາໃຈໃສ່ກໍ່ສ້າງມະຫາຊົນຜູ້ກ້າວໜ້າ ແລະ ຂະຫຍາຍຈຳນວນສະມາຊິກກຳມະບານ ໂດຍໃນປັດຈຸບັນກຳມະບານຮາກຖານ ທຫລ ມີໜ່ວຍກຳມະບານທີ່ຂຶ້ນກັບ ຈຳນວນ 20 ໜ່ວຍ, ມີສະມາຊິກກຳມະບານທັງໝົດ 890 ສະຫາຍ, ຍິງ 504 ສະຫາຍ. ນອກຈາກນີ້, ຍັງໄດ້ເອົາໃຈໃສ່ຍົກລະດັບສະມາຊິກກຳມະບານຢ່າງຮອບດ້ານ ທັງດ້ານວິຊາສະເພາະ, ທິດສະດີ ແລະ ພາສາຕ່າງປະເທດ. ປັດຈຸບັນ, ວຸດທິການສຶກສາຂອງສະມາຊິກກຳມະບານ ໃນລະດັບຊັ້ນສູງຂຶ້ນໄປແມ່ນກວມເອົາ 92,8% ຂອງຈຳນວນສະມາຊິກທັງໝົດ; ດ້ານວິຊາສະເພາະ: ສະມາຊິກກຳມະບານຮາກຖານ ທຫລ ໄດ້ເອົາໃຈໃສ່ຮັບຜິດຊອບວຽກງານດ້ານວິຊາສະເພາະຂອງຕົນໄດ້ເປັນຢ່າງດີ ໂດຍສະເພາະໃນການຮັກສາສະຖຽລະພາບທາງດ້ານເງິນຕາ, ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ມີຄວາມໝັ້ນຄົງ ມີຄວາມເຕີບໃຫຍ່ທາງດ້ານປະລິມານ ແລະ ຄຸນນະພາບ, ການຄຸ້ມຄອງລະບົບການຊຳລະໃຫ້ມີປະສິດທິພາບ, ພັດທະນາພື້ນຖານໂຄງລ່າງຂອງຂະແໜງການທະນາຄານໃຫ້ເປັນທີ່ທັນສະໄໝຢ່າງບໍ່ຢຸດຢັ້ງ. ຄະນະກຳມະບານຮາກຖານໄດ້ເອົາໃຈໃສ່ຊຸກຍູ້

ບັນດາໜ່ວຍໃຫ້ສ້າງຂະບວນການອອກແຮງງານ, ປະກອບສ່ວນໃນຂະບວນການກິລາ, ສິລະປະ-ວັນນະຄະດີ, ການຢ້ຽມຢາມສະຖານທີ່ສຳຄັນທາງປະຫວັດສາດໃນໂອກາດວັນສຳຄັນຕ່າງໆ, ການຊ່ວຍເຫຼືອສັງຄົມໂດຍການລະດົມທຶນເພື່ອຊື້ເຄື່ອງອຸປະໂພກ-ບໍລິໂພກ, ອຸປະກອນການສຶກສາ ໄປມອບໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ, ການບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມ, ຢ້ຽມຢາມ-ອຶບອຸ່ນສະມາຊິກກຳມະບານ ແລະ ຄອບຄົວຂອງສະມາຊິກທີ່ເຈັບເປັນ ຫຼື ເສຍຊີວິດ ແລະ ອື່ນໆ. ນອກຈາກນີ້, ສະຫະພັນກຳມະບານ ທຫລ ຍັງໄດ້ເອກະພາບກັນສ້າງກອງທຶນເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາສຸກເສີນ ຫຼື ເຈັບເປັນ ເຊິ່ງເປັນລາຍຮັບທີ່ໄດ້ມາຈາກເງິນສະຕິ ຈຳນວນ 5,000 ກີບ/ຄົນ/ເດືອນ ມາຮອດວັນທີ 12 ພຶດສະພາ 2020 ເງິນຄັງຂອງກຳມະບານຮາກຖານ ທຫລ ມີຈຳນວນທັງໝົດ 44,418,173.32 ກີບ ແລະ ວຽກງານສຳຄັນອື່ນໆ. ນອກຈາກນີ້ ຍັງໄດ້ນຳສະເໜີບາງຂໍ້ຄົງຄ້າງທີ່ຈະຕ້ອງໄດ້ຮັບການເອົາໃຈໃສ່ແກ້ໄຂ ແລະ ພ້ອມນີ້ ກອງປະຊຸມຍັງໄດ້ວາງທິດທາງແຜນການ ການເຄື່ອນໄຫວໃນໄລຍະ 5 ປີ ຕໍ່ໜ້າ (ປີ 2020-2025).









ກອງປະຊຸມຍັງໄດ້ຈັດຕັ້ງການປ່ອນບັດເລືອກເອົາຄະນະກຳມະບານຮາກຖານ ທຫລ ຊຸດໃໝ່ ປະກອບມີ 13 ສະຫາຍ, ເພດຍິງ 5 ສະຫາຍ ແລະ ໄດ້ເລືອກເອົາສະຫາຍ ເສີມທະວີ ສີຫາຝົນ ເປັນປະທານກຳມະບານຮາກຖານ ທຫລ, ສະຫາຍນາງ ມະໂນລາ ເມືອງມະນີ ເປັນຮອງປະທານ ແລະ ຜູ້ປະຈຳການ, ສະຫາຍ ສົມເພັດ ວົງຄຳຈັນ ເປັນຮອງປະທານ, ສະຫາຍ ທິລະຍຸດ ພາດວນສິນ ເປັນປະທານກວດກາ.

ໃນຕອນທ້າຍຂອງພິທີ, ສະຫາຍ ຮອງເລຂາຄະນະພັກ ທຫລ ໄດ້ໃຫ້ກຽດໂອ້ລົມ, ໂດຍສະຫາຍໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ຂອງສະມາຊິກກຳມະບານຮາກຖານ ທຫລ ພ້ອມທັງໄດ້ເນັ້ນໃຫ້ບັນດາຄະນະກຳມະບານຊຸດໃໝ່ຕ້ອງເອົາໃຈໃສ່ສຶກສາອົບຮົມແນວຄິດການເມືອງໃຫ້ແກ່ສະມາຊິກເປັນວຽກງານພື້ນຖານອັນສຳຄັນ ເພື່ອຍົກສູງການຊີ້ນຳ-ນຳພາຂອງຄະນະກຳມະບານແຕ່ລະຂັ້ນ, ປັບປຸງແບບແຜນວິທີການເຮັດວຽກໃຫ້ແທດເໝາະກັບໜ້າທີ່ການເມືອງ, ກໍ່ສ້າງສະມາຊິກໃຫ້ມີທັດສະນະການເມືອງໜັກແໜ້ນ, ມີຄວາມຮູ້-ຄວາມສາມາດ ເພື່ອເປັນກຳລັງແຮງຕົ້ນຕໍຊ່ວຍຂັ້ນເທິງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍໃຫ້ສຳເລັດ ແລະ ຍັງໄດ້ຮຽກຮ້ອງໃຫ້ເອົາໃຈໃສ່ຕິດຕາມຊຸກຍູ້, ກວດກາປະເມີນຜົນການຈັດຕັ້ງປະຕິບັດແຕ່ລະໄລຍະເພື່ອຍົກລະດັບການປັບປຸງແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງຕ່າງໆ ໃຫ້ທັນກັບສະພາບການໃນຕໍ່ໜ້າ.






# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.

ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ